VIENTIANE CENTER
ວຽງຈັນເຊັ້ນເຕີ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

****

ເລກທີ 033 -

ນະຄອນຫຼວງວຽງຈັນ, ວັນທີ 30 MAR 2020

ຂໍ້ຕົກລົງ

ວ່າດ້ວຍມາດຕະການປ້ອງກັນການແຜ່ລະບາດຂອງພະຍາດ ໂຄວິດ 19 (Covid19)

ໃນບາງຫ້ອໜ່ວຍທຸລະກິດຂຶ້ນກັບ ບໍລິສັດວຽງຈັນເຊີນເຕີລາວມະຫາຊົນ

- ອີງຕາມໜັງສືແຈ້ງການຂອງຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມແລະແກ້ໄຂການລະບາດຂອງເຊື້ອ ຈຸລະໂລກສາຍພັນໃໝ່ Covid19 ສະບັບເລກທີ 002/ສພກ ລົງວັນທີ 02 ມີນາ 2020.
- ອີງຕາມຄຳສັ່ງວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ກັກການລະບາດ, ຄວບຄຸມ ແລະ ກຽມ ຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ 19 (Covid19) ສະບັບເລກທີ 06/ນຍ ລົງວັນທີ29 ມີ ນາ 2020.
- ອີງຕາມກອງປະຊຸມຮ່ວມລະຫວ່າງຄະນະອຳນວຍການ ແລະອີງຕາມການຊີ້ນຳຂອງປະທ່ານຄັ້ງວັນທີ 30 ມີນາ 2020.

ເນື່ອງຈາກໃນປະຈຸບັນນີ້ ສະພາບການແຜ່ລະບາດຂອງເຊື້ອຈຸລະໂລກສາຍພັນໃໝ່ Covid19 ຍັງສືບ ຕໍ່ເພີ່ມຂຶ້ນຢ່າງຕໍ່ເໜື່ອງ. ສຳລັບຢູ່ປະເທດລາວ ເຖິງວ່າລັດຖະບານໄດ້ມີມາດຕະການສະກັດກັ້ນ ແລະ ກັກ ການລະບາດພະຍາດນີ້ຢ່າງຈິງຈັງໃນໄລຍະຜ່ານມາ ແຕ່ມາເຖິງປະຈຸບັນກໍ່ໄດ້ກວດພົບຜູ້ຕິດເຊື້ອ. ເພື່ອປະ ຕິບັດຕາມມາດຕະການຕອບໂຕ້ ແລະ ຄວບຄຸ້ມການແຜ່ລະບາດຂອງເຊື້ອພະຍາດດັ່ງກ່າວໃນປະເທດ ພວກເຮົາທີ່ລັດຖະບານວ່າງອອກຢ່າງເຄັ່ງຄັດ ບໍລິສັດວຽງຈັນເຊີນເຕີ ລາວ ມະຫາຊົນ ຖືສຳຄັນອັນດັບໜຶ່ງ ໃນການປ້ອງກັນຊີວິດ ແລະ ສຸຂະພາບຂອງບັນດານັກທຸລະກິດ ພໍ່ຄ້າຊາວຂາຍ ກໍ່ຄືພະນັກງານຂອງ ບໍລິ ສັດວຽງຈັນເຊີນເຕີ ລາວ ມະຫາຊົນ ຕະຫຼອດຮອດພໍ່ແມ່ປະຊາຊົນທີ່ມາໃຊ້ບໍລິການໃນສະຖານທີ່ດັ່ງກ່າວ.

ຜູ້ອຳນວຍການໃຫ່ຍບໍລິສັດວຽງຈັນເຊີນເຕີລາວມະຫາຊົນໄດ້ຕົກລົງ:

1. ເຫັນດີໃຫ້ຢຸດເຂດຊື່ວຄາວເຂດສູນການຄ້າໃນລະຫວ່າງວັນທີ 30 ມີນາ2020 ເຖິງວັນທີ 29 ເມສາ 2020, ນອກຈາກຮ້ານຢູ່ທີ່ຊັ້ນ1 ບາງຮ້ານຄ້າທີ່ຕິດກັບຖະໜົນເຊັ່ນ: ຮ້ານກາເຟ ຊຸບເປີ້ມາເກັດ L-mart, ພາຍໃຕ້ເງື່ອນໄຂ ຮັບປະກັນຄວາມປອດໄພໃນການດຳເນີນທຸລະກິດແລ້ວ.

2. ສຳລັບເຂດອາຄານຫ້ອງການ, ແມ່ນເປີດບໍລິການປົກກະຕິໃຫ້ບັນດາບໍລິສັດທີ່ໄດ້ຕັ້ງສຳນັກງານຢູ່ໃນອາຄານ ຫ້ອງການ, ເພື່ອສະກັດກັ້ນການລະບາດ ທາງບໍລິສັດໄດ້ຈັດຫ້ອງສະເພາະເພື່ອຕອນຮັບແຂກ ແລະ ບໍ່ອະນຸຍາດແຂກ ພາຍນອກຂຶ້ນໄປຫ້ອງການໃນແຕ່ລະຊັ້ນ, ມີການກວດເທົ້ກອຸນຫະພຶມຮ່າງກາຍຂອງພະນັກງານ ພ້ອມມີການບັນທຶກ ໄວ້, ສະໜອງເຈ່ວນ້ຳ ຢ້າຂ້າເຊື້ອໃຫ້ໃຊ້ຟຣີ, ເພີ່ມທະວີການສີດພົ້ນນ້ຳຢ້າຂ້າເຊື້ອໃນເຂດສາທາລະນະ.

ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໄທ ແລະ ແຟັກ: (+856) 21 228299

KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, LAO PDR, Tel & Fax: (+856) 21 228299

ພ້ອມດຽວກັນນັ້ນ ຍັງມີການປັບປຸງເຕີ່ມອີກເພື່ອປະຕິບັດຕາມການສະກັດກັ້ນ, ກັກການລະບາດ ເພື່ອຕ້ານພະຍາດ ໂຄວິດ 19 (Covid19).

ຜູ້ອຳນວຍການໃຫຍ່

ບໍລິສັດ ວຽງຈັນເຊັ້ນເຕີລາວມະຫາຊົນ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
Vientiane Center Lao Public Company